# ປະເມີນກາງສະໄໝການຈັດຕັ້ງປະຕິບັດແຜນແມ່ບົດປະຊາຄົມເສດຖະກິດອາຊຽນ 2015-2025ຂອງ ສປປ ລາວ

# Midterm Review of the AESEAN Economic Community Blueprint 2015-2025 of the Lao PDR

ບຸນເລີດ ວັນນະລາດ[1], ວິຣິຍະສັກ ສີສຸພັນທອງ[2], ໄຄສີ ສະຣິດທິລາດ[3]

## ບົດຄັດຫຍໍ້

ຈາກຜົນສຳເລັດໃນການຈັດຕັ້ງປະຕິບັດປະຊາຄົມເສດຖະກິດອາຊຽນໃນປີ 2015, ຜູ້ນຳອາຊຽນໄດ້ສືບຕໍ່ ສ້າງແຜນແມ່ບົດປະຊາຄົມເສດຖະກິດອາຊຽນ 2016-2025 ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 27 ໃນວັນທີ 22 ພະຈິກ 2015, ເຊິ່ງແຜນແມ່ບົດດັ່ງກ່າວນີ້ມີໄລຍະການຈັດຕັ້ງປະຕິບັດພາຍໃນ 10 ປີ. ເພື່ອຕິດຕາມຄວາມ ຄືບໜ້າ ແລະ ປະເມີນຜົນສຳເລັດ ແລະ ສິ່ງທ້າທາຍຈາກການຈັດຕັ້ງປະຕິບັດແຜນແມ່ບົດດັ່ງກ່າວ. ຈຸດປະສົງບົດຄົ້ນ ຄ້ວານີ້ເພື່ອ ວິເຄາະຜົນຂອງການຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025 ຕາມແຕ່ລະເປົ້າ ໝາຍ ແລະ ປະເມີນຜົນກະທົບຂອງການຈັດຕັ້ງປະຕິບັດແຜນປະຊາຄົມເສດຖະກິດອາຊຽນຕໍ່ກັບການພັດທະນາເສດ ຖະກິດ-ສັງຄົມ. ໂດຍນຳໃຊ້ແບບຈຳລອງ Autoregressive ເພື່ອປະເມີນຜົນກະທົບດັ່ງກ່າວຢູ່ ສປປ ລາວ ແລະ ໄດ້ລົງສຳພາດຕົວຈິງກັບຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດເພື່ອຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນແມ່ບົດປະຊາຄົມເສດຖະກິດອາຊຽນກາງສະໄໝ. ຜົນໄດ້ຮັບຈາກການສຶກສາພົບວ່າ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນກາງສະໄໝ ແມ່ນສາມາດປະຕິບັດໄດ້ສຳ ເລັດ 21.3% ຂອງແຜນງານທັງໝົດ, 65% ແມ່ນກຳລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ ແລະ 13.7% ແມ່ນບໍ່ທັນໄດ້ຈັດຕັ້ງປະຕິບັດ. ຜົນຂອງການຄາດປະມານຊີ້ໃຫ້ເຫັນວ່າ ຜົນກະທົບຂອງ AEC ທີ່ມີຜົນກະທົບທາງບວກຕໍ່ກັບການສົ່ງອອກ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ແລະ ມີຄວາມສຳຄັນທາງສະຖິຕິໃນລະດັບ 10%.

**ຄຳສັບສຳຄັນ:** ປະຊາຄົມເສດຖະກິດອາຊຽນ (AEC), ແຜນປະຕິບັດງານຍຸດທະສາດລວມ ແລະ ຜົນກະທົບຂອງ AEC ຕໍ່ເສດຖະກິດ ແລະ ສັງຄົມ.

---

[1] ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, Email: probounlert@yahoo.com

[2] ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, Email: s.viriyasack@outlook.com

[3] ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, Email: K.srithilat@nuol.edu.la

## Abtract

From the achievement of implementing AEC Blueprint in 2015, the ASEAN leaders have been established the new AEC blueprint 2016-2025 on the 27th ASEAN Summit on 22 November, 2015. The new AEC Blueprint has been implemented during the period of 10 years. In order to follow up and evaluate the progress of implementing the AEC Blueprint 2025. This study aims at evaluating the progress of the Midterm AEC Blueprint 2025 implementation based on the commitment action plans, and investigating its impact on the Lao's social and economy development. The Autoregressive model has been utilized together with the field survey for both public and private sectors will be taken into accounted. The results reveals that an implementation of AEC Blueprint of Lao PDR has been progressively achieved 21.3% of the total commitment action plans, majority of 65% is on the progress of implementing, and other 13.7% is not yet starting. The results of Autoregressive estimation show that implementation of AEC Blueprint 2016-2025 has positively effected on export and foreign direct investment with statistically significant at 10%.

**Keywords:** ASEAN Economic Community (AEC), Consolidated Strategic Action Plan, and Impact of AEC on Economic and Social.

# I. ບົດສະເໜີ

ພາຍຫຼັງການສ້າງຕັ້ງປະຊາຄົມເສດຖະກິດອາຊຽນ ປີ 2015, ອາຊຽນໄດ້ມີຜົນສຳເລັດຫຼາຍດ້ານໃນການສົ່ງເສີມການເຊື່ອມໂຍງເສດຖະກິດພາກພື້ນ ໂດຍສະເພາະການລຶບລ້າງອັດຕາພາສີ ແລະ ການສົ່ງເສີມການຄ້າ ແລະ ການບໍລິການຢ່າງເສລີ, ການອຳນວຍຄວາມສະດວກດ້ານການລົງທຶນ, ການເຄື່ອນຍ້າຍກຳລັງແຮງງານທີ່ມີສີມື, ການສົ່ງ ເສີມການພັດທະນາດ້ານການແຂ່ງຂັນຂອງພາກພື້ນ, ສົ່ງເສີມການເຊື່ອມໂຍງເສດຖະກິດກັບພາຍນອກ. ຈາກຜົນສຳເລັດດັ່ງກ່າວຂ້າງເທິງ, ຜູ້ນຳອາຊຽນໄດ້ຮັບຮອງເອົາແຜນແມ່ບົດປະຊາຄົມເສດຖະກິດອາຊຽນ 2016-2025 ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 27 ໃນວັນທີ 22 ພະຈິກ 2015 ເຊິ່ງແຜນແມ່ບົດດັ່ງກ່າວນີ້ມີໄລຍະການຈັດຕັ້ງປະຕິບັດພາຍໃນ 10 ປີ ແລະ ສ້າງຂຶ້ນເພື່ອສືບຕໍ່ດຳເນີນການປະຕິບັດການສ້າງປະຊາຄົມເສດຖະກິດອາຊຽນ 2015. ແຜນແມ່ບົດ 2016-2025 ກວມເອົາ 5 ເປົ້າໝາຍສຳຄັນຄື: (1) ປະເທດສະມາຊິກອາຊຽນມີລະບົບເສດຖະກິດທີ່ມີການເຊື່ອມໂຍງ ແລະ ຫຍັບເຂົ້າກັນສູງຂຶ້ນ; (2) ປະຊາຄົມເສດຖະກິດອາຊຽນມີຄວາມສາມາດແຂ່ງຂັນ, ມີນະວັດຕະກຳ ແລະ ເຂັ້ມແຂງ; (3) ສົ່ງເສີມການເຊື່ອມຈອດດ້ານເສດຖະກິດ ແລະ ການຮ່ວມມືຂອງຂະແໜງການ; (4) ປະຊາຄົມເສດຖະກິດອາຊຽນມີຄວາມສາມາດປັບຕົວ, ເດີນໜ້າໄປພ້ອມກັນທຸກພາກສ່ວນ ແລະ ມີປະຊາຊົນເປັນຈຸດສູນກາງ; ແລະ (5) ປະຊາຄົມເສດຖະກິດອາຊຽນເປັນສ່ວນສຳຄັນ ແລະ ມີບົດບາດໂດດເດັ່ນໃນປະຊາຄົມໂລກ. ແຜນແມ່ບົດດັ່ງກ່າວນີ້ ຈະໄດ້ທົບທວນຄືນການຈັດຕັ້ງປະຕິບັດກາງສະໄໝ ໃນປີ 2020 ເພື່ອຕິດຕາມກວດກາຄວາມຄືບໜ້າ ແລະ ປະເມີນຜົນໄດ້ຮັບ/ຜົນກະທົບ, ຜົນສຳເລັດ ແລະ ບັນຫາທ້າທາຍຈາກການຈັດຕັ້ງປະຕິບັດແຜນແມ່ບົດດັ່ງກ່າວ.

ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025, ອາຊຽນໄດ້ຮັບຮອງເອົາແຜນປະຕິບັດງານຍຸດທະສາດລວມຂອງອາຊຽນ (CSAP) ທີ່ປະກອບມີຫຼາຍກວ່າ 100 ຕົວຊີ້ວັດ ແລະ ຫຼາຍກວ່າ 500 ກິດຈະກຳ. ຈຸດປະສົງຂອງການປະເມີນກາງສະໄໝໃນການຈັດຕັ້ງປະຕິບັດປະຊາຄົມເສດຖະກິດອາຊຽນຂອງ ສປປ ລາວ ແມ່ນເພື່ອ (1) ວິເຄາະຜົນຂອງການຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025 ຕາມແຕ່ລະເປົ້າໝາຍ ແລະ (2) ປະເມີນຜົນກະທົບຂອງການຈັດຕັ້ງປະຕິບັດແຜນປະຊາຄົມເສດຖະກິດອາຊຽນຕໍ່ກັບການພັດທະນາເສດຖະກິດ-ສັງຄົມ. ບົດຄົ້ນ ຄ້ວາດັ່ງກ່າວ ມີເປັນຂໍ້ມູນອ້າງອີງສຳຄັນ ເພື່ອປະເມີນຜົນໄດ້ຮັບຂອງການຈັດຕັ້ງປະຕິບັດ AEC ແລະ ເພື່ອຮັບປະກັນຜົນປະໂຫຍດຈາກການເຂົ້າຮ່ວມປະຊາຄົມດັ່ງກ່າວ.

# II. ທົບທວນບົດຄົ້ນຄວ້າວິທະຍາສາດ, ລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ

## 2.1 ທົບທວນບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ

ASEAN Secretariat (2021) ໄດ້ທົບທວນການຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ ກາງສະໄໝ 2016-2020 ເຊິ່ງໄດ້ສະແດງໃຫ້ເຫັນວ່າ ບັນດາປະເທດສະມາຊິກອາຊຽນສ່ວນໃຫຍ່ແມ່ນໄດ້ສຳເລັດການຈັດຕັ້ງປະຕິບັດກິດຈະກຳທີ່ກ່ຽວຂ້ອງກັບໜ້າວຽກຕ່າງໆທີ່ໄດ້ຕົກລົງກັນ ເຊິ່ງກວມອັດຕາສ່ວນສູງເຖິງ 54.1%, ກຳລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດແມ່ນ 34.2%, ຍັງບໍ່ທັນໄດ້ຮັບການ ຈັດຕັ້ງປະຕິບັດ ແມ່ນ 9.2% ແລະ ໄດ້ຮັບການຍົກເລີກແມ່ນ 2.5%. ເມື່ອລົງເລິກລາຍລະອຽດໃນແຕ່ລະເປົ້າໝາຍເຫັນວ່າ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແມ່ນບໍ່ມີຄວາມແຕກຕ່າງກັນຫຼາຍປານໃດ. ເປົ້າໝາຍທີ່ໄດ້ຈັດຕັ້ງປະຕິບັດສຳເລັດຫຼາຍສຸດແມ່ນເປົ້າໝາຍທີ 1, ສາມາດປະຕິບັດໄດ້ 60.3% ແລະ ເປົ້າໝາຍ ທີ່ປະຕິບັດສຳເລັດໜ້ອຍສຸດແມ່ນເປົ້າໝາຍທີ 2, ສາມາດປະຕິບັດໄດ້ 43.5%.

Intal & Intal (2015) ໄດ້ອະທິບາຍກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດ ແລະ ສິ່ງທ້າທາຍແຜນງານອາຊຽນ ໂດຍລົງເລິກການອຳນວຍຄວາມສະດວກດ້ານການຄ້າ ເຊິ່ງໄດ້ສະແດງໃຫ້ເຫັນວ່າ ການອຳນວຍຄວາມສະດວກດ້ານການຄ້າໃນພາກພື້ນອາຊຽນ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ແຕ່ຢ່າງໃດ

ກໍຕາມ ຊ່ອງວ່າງຄວາມແຕກໂຕນລະຫວ່າງປະເທດສະມາຊິກເກົ່າ ແລະ ປະເທດສະມາຊິກໃໝ່ຍັງສູງ, ບັນຫາສຳຄັນແມ່ນການຂາດແຄນແຫຼ່ງເງິນທຶນ, ຂາດຄວາມຊຳນິຊຳນານທາງດ້ານເຕັກນິກວິຊາການ, ໂຄງລ່າງພື້ນຖານ ແລະ ບັນຫາການປະສານງານລະຫວ່າງໜ່ວຍງານຕ່າງໆ.

Kimura (2015) ໄດ້ວິເຄາະຄວາມໝາຍທີ່ແທ້ຈິງຂອງການຮ່ວມກຸ່ມເສດຖະກິດອາຊຽນເຂົ້າເປັນຕະຫຼາດ ແລະ ຖານການຜະລິດດຽວ ເປັນຫົນທາງທີ່ຖືກຕ້ອງ ແຕ່ວ່າບັນຫາທ້າທາຍທີ່ເຮັດໃຫ້ບໍ່ສາມາດບັນລຸໄດ້ວັດຖຸປະສົງດັ່ງກ່າວ ແມ່ນຂຶ້ນຢູ່ກັບຄວາມແຕກໂຕນການພັດທະນາ 2 ປັດໄຈຄື: ຄວາມແຕກຕ່າງດ້ານພູມສາດ ແລະ ຄວາມແຕກຕ່າງກັນດ້ານອຸດສາຫະກຳ. ເພາະສະນັ້ນ, ເພື່ອຢາກບັນລຸເປົ້າໝາຍດັ່ງກ່າວຕ້ອງຫຼຸດຜ່ອນຄວາມແຕກໂຕນກັນທາງດ້ານການພັດທະນາກ່ອນ. ໃນຂະນະທີ່ Dee (2009) ໄດ້ສົມທຽບນະໂຍບາຍຂອງຂະແໜງການສາທາລະນະສຸກ ແລະ ການໃຫ້ບໍລິການທາງດ້ານການເງິນ ແລະ ທະນາຄານຂອງບັນດາປະເທດອາຊຽນ ໄດ້ສະເໜີວ່າບັນດາປະ ເທດອາຊຽນຄວນຮ່ວມມືກັນໃນການສ້າງມາດຕະຖານຄຸນນະພາບທີ່ເປັນທີ່ຍອມຮັບຮ່ວມກັນທາງດ້ານບຸກຄະລາກອນ ແລະ ສະຖານບໍລິການຕ່າງໆ ເຊິ່ງເປັນກຸນແຈສຳຄັນໃນການແກ້ໄຂຄວາມແຕກຕ່າງກັນ ດ້ານລະບຽບການຕ່າງໆ ແລະ ນຳໄປສູ່ການຈຳແນກການໃຫ້ບໍລິການ. ໃນຂະແໜງການທະນາຄານ ກໍເຊັ່ນດຽວກັນ ການໃຫ້ບໍລິການແກ່ຄົນຕ່າງຊາດແມ່ນຖືກແບ່ງແຍກ ແລະ ເຂັ້ມງວດກວ່າຄົນພາຍໃນປະເທດ.

Menon et al. (2019) ໄດ້ປະເມີນການຈັດຕັ້ງປະຕິບັດ CSAP ພົບວ່າສາມາດປະຕິບັດໄດ້ເຕັມສ່ວນມີພຽງ 17.7%. ນອກນັ້ນ, ໜຶ່ງໃນຍຸດທະສາດສຳຄັນໃນການຈັດຕັ້ງປະຕິບັດແຜນແມ່ນບົດ AEC 2025 ແມ່ນເພີ່ມມູນຄ່າການຄ້າໃນປະເທດສາມະຊິກອາຊຽນໃຫ້ໄດ້ 2 ເທົ່າໃນປີ 2025. ເຖິງຢ່າງໃດກໍຕາມ, ການເຕີບໂຕທີ່ຂ້ອນຂ້າງຊ້າຂອງການຄ້າ ແລະ ການລົງທຶນພາຍໃນອາຊຽນ ລວມທັງ ຂາດຄວາມສອດຄ່ອງທາງດ້ານການຄ້າ ແລະ ຄວາມຫຼາກຫຼາຍທາງດ້ານຮູບແບບຂອງການພັດທະນາ ອາດເຮັດໃຫ້ ການຈັດຕັ້ງປະຕິບັດ AEC ບໍ່ສາມາດປະຕິບັດໄດ້ຕາມເປົ້າໝາຍທີ່ວາງໄວ້.

**2.2 ລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດປະຊາຄົມເສດຖະກິດອາຊຽນ (AEC)**

ເລີ່ມແຕ່ໄດ້ມີການຈັດຕັ້ງປະຕິບັດ AEC ປີ 2015 ຈົນເຖິງປັດຈຸບັນ ສປປ ລາວ ໄດ້ມີການສ້າງ ແລະ ປັບປຸງລະບຽບການ ແລະ ກົດໝາຍຫຼາຍສະບັບ ເພື່ອສະໜັບສະໜູນການຈັດຕັ້ງປະບັດແຜນແມ່ບົດປະຊາຄົມ ເສດຖະກິດອາຊຽນ. ເຊິ່ງກົດໝາຍດັ່ງກ່າວ ເປັນເຄື່ອງມືສຳຄັນເພື່ອເຊື່ອມໂຍງເສດຖະກິດຂອງ ສປປ ລາວ ໃຫ້ເຂົ້າກັບເສດຖະກິດຂອງພາກພື້ນ ແລະ ສາກົນ. ອີງຕາມການສຳພາດບໍລິສັດທີ່ປຶກສາດ້ານກົດໝາຍໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ໄດ້ປະສົບ ຜົນສຳເລັດໃນການສ້າງກົດໝາຍຫຼາຍສະບັບເພື່ອສະ ໜັບສະໜູນການຈັດຕັ້ງປະຕິບັດ AEC, ເປັນຕົ້ນກົດ ໝາຍສົ່ງເສີມການລົງທຶນ, ກົດໝາຍການແຂ່ງຂັນ, ກົດໝາຍການປົກປ້ອງຜູ້ບໍລິໂພກ, ດຳລັດວ່າດ້ວຍການຄ້າ ອີເລັກໂຕຼນິກ, ກົດໝາຍການຖ່າຍທອດເຕັກໂນໂລຊີ ແລະ ອື່ນໆ, ເຊິ່ງກົດໝາຍດັ່ງກ່າວ ມັນເປັນບ່ອນອີງສຳຄັນເພື່ອຊ່ວຍໃຫ້ຜູ້ປະກອບການໃນການດຳເນີນທຸລະກິດ ແລະ ຮອງຮັບກັບການເຊື່ອມໂຍງເສດຖະກິດກັບພາກພື້ນ, ສ້າງຄວາມເຊື່ອໝັ້ນໃຫ້ກັບນັກລົງທຶນພາຍໃນ ແລະ ຕ່າງປະເທດ. ການມີລະບົບກົດໝາຍທີ່ດີ ຈະຊ່ວຍເປັນການກະຕຸ້ນເສດຖະກິດໃຫ້ມີການພັດທະນາຢ່າງມີປະສິດທິຜົນ. ເຖິງຢ່າງໃດກໍຕາມ, ຫຼາຍກົດໝາຍທີ່ສ້າງຂຶ້ນໃນໄລຍະຜ່ານມາຍັງຂາດຄູ່ມືແນະນຳການຈັດຕັ້ງປະຕິບັດທີ່ລະອຽດຊັດເຈນເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍເຫຼົ່ານັ້ນຍັງບໍ່ໄດ້ດີເທົ່າທີ່ຄວນ ແລະ ບໍ່ສອດຄ່ອງກັບຂໍ້ກຳນົດ ແລະ ພັນທະຕໍ່ອາຊຽນ.

## III. ວິທີການສຶກສາ

ການປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານ AEC 2016-2025 ຂອງ ສປປ ລາວ ແມ່ນອີງໃສ່ແຜນປະຕິບັດງານຍຸດທະສາດລວມຂອງອາຊຽນ (CSAP) ດັ່ງທີ່ໄດ້ສະຫຼຸບໃນຕາຕະລາງ ທີ 3.1. ອີງຕາມແຜນປະຕິບັດງານຂອງ AEC 2016-2025 ທີ່ 10 ປະເທດເຫັນດີຕົກລົງຈັດຕັ້ງປະຕິບັດ ເຊິ່ງມີທັງ

ໝົດ 381 ກິດຈະກາ. ສາລັບການປະເມີນການສະໄໝຂອງການຈັດຕັ້ງປະຕິບັດແຜນງານ AEC ສາລັບ ສປປ ລາວ ຄັ້ງນີ້ ແມ່ນໄດ້ສຳພາດພາກສ່ວນທີ່ກ່ຽວຂ້ອງທັງໝົດ 268 ກິດຈະກຳ, ກວມອັດຕາ ສ່ວນ 78.4% ຂອງ ຈຳນວນກຳຈະກຳທີ່ໄດ້ຕົກລົງທັງໝົດ.

**ຕາຕະລາງທີ 3.1: ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດໃນແຜນປະຕິບັດງານ AEC 2016-2025 (CSAP)**

| ແຜນປະຕິບັດງານ AEC | ກິດຈະກຳທັງໝົດ | ກິດຈະກຳສຳພາດ | ອັດຕາສ່ວນສຳພາດ (%) |
|---|---|---|---|
| ກິດຈະກຳໃນການຈັດຕັ້ງປະຕິບັດ AEC ທັງໝົດ | 381 | 268 | 70.3 |
| 1. ປະເທດອາຊຽນມີລະບົບເສດຖະກິດທີ່ມີການເຊື່ອມໂຍງ ແລະ ຍັບເຂົ້າກັນສູງຂຶ້ນ | 111 | 87 | 78.4 |
| 2. ປະຊາຄົມເສດຖະກິດອາຊຽນມີຄວາມສາມາດແຂ່ງຂັນ, ມີນະວັດຕະກຳ ແລະ ເຂັ້ມແຂງ | 62 | 54 | 87.1 |
| 3. ສົ່ງເສີມ ການເຊື່ອມຈອດເສດຖະກິດ ແລະ ການຮ່ວມມື ຂອງຂະແໜງການ | 130 | 76 | 58.5 |
| 4. ປະຊາຄົມເສດຖະກິດອາຊຽນມີການປັບຕົວ, ເດີນໜ້າ ໄປພ້ອມກັນທຸກພາກສ່ວນ ແລະ ມີປະຊາຊົນເປັນສູນກາງ | 69 | 42 | 60.9 |
| 5. ປະຊາຄົມເສດ ຖະກິດອາຊຽນເປັນສ່ວນສາຄັນ ແລະ ມີບົດບາດໂດດເດັ່ນໃນປະຊາຄົມໂລກ | 9 | 9 | 100.0 |

ແຫຼ່ງຂໍ້ມູນ: ໄດ້ຈາການສຳພາດໃນເດືອນມິຖຸນາ, 2021.

ເພື່ອຄາດປະມານຜົນກະທົບຂອງການຈັດຕັ້ງປະຕິບັດແຜນງານ AEC ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ, ການສຶກສານີ້ໄດ້ເລືອກເອົາ 10 ຕົວຊີ້ວັດ ດັ່ງທີ່ສະແດງຢູ່ໃນຕາຕະລາງຂ້າງລຸ່ມນີ້. ຕົວຊີ້ວັດເສດຖະກິດມະຫາພາກມີຈຳນວນ 7 ຕົວປ່ຽນຄື: ການສົ່ງອອກໄປອາຊຽນ, ການນຳເຂົ້າຈາກອາຊຽນ, ການຄ້າກັບອາຊຽນ, ລວມຍອດຜະລິດຕະພັນມວນລວມພາຍໃນ, ການລົງທຶນໂດຍກົງຈາກຕ່າງປະທດ, ຈຳນວນນັກທ່ອງທ່ຽວຈາກອາຊຽນ, ແລະ ລາຍຮັບຈາກການທ່ອງທ່ຽວ. ສຳລັບຕົວຊີ້ວັດສັງຄົມໄດ້ແບ່ງອອກເປັນ 3 ຕົວປ່ຽນຄື: ລາຍຮັບຕໍ່ຫົວຄົນ, ເງິນເຟີ້, ດັດຊະນີພັດທະນາຊັບພະຍາກອນມະນຸດ, ນິຍາມ ແລະ ແຫຼ່ງຂໍ້ມູນແຕ່ລະຕົວປ່ຽນແມ່ນສະແດງຢູ່ໃນຕາຕະລາງ 3.2 ລຸ່ມນີ້:

**ຕາຕະລາງທີ 3.2: ນິຍາມ ແລະ ແຫຼ່ງທີ່ມາຂອງຂໍ້ມູນນອງແຕ່ລະຕົວປ່ຽນ**

| ຕົວປ່ຽນ | ນິຍາມ | ທີ່ມາຂອງ |
|---|---|---|
| ເສດຖະກິດມະຫາພາກ | | |
| ສົ່ງອອກອາຊຽນ | ການສົ່ງອອກໄປປະເທດອາຊຽນ (ຕື້ໂດລາສະຫະລັດ) | ADB |
| ນຳເຂົ້າອາຊຽນ | ການນຳເຂົ້າປະເທດອາຊຽນ (ຕື້ໂດລາສະຫະລັດ) | ADB |
| ການຄ້າອາຊຽນ | ບໍລິມາດການຄ້າໄປປະເທດອາຊຽນ (ຕື້ໂດລາສະຫະ ລັດ) | ADB |
| GDP | ລວມຍອດຜະລິດຕະພັນມວນລວມພາຍໃນ (ຕື້ໂດລາສະຫະລັດ) | WB |
| FDI | ການລົງທຶນໂດຍກົງຈາກຕ່າງປະເທດ (ຕື້ໂດລາສະຫະ ລັດ) | WB |
| ຈຳນວນນັກທ່ອງທ່ຽວ | ນັກທ່ອງທ່ຽວຈາກອາຊຽນ (ລ້ານຄົນ) | MoCT |
| ລາຍຮັບຈາກທ່ອງທ່ຽວ | ລາຍຮັບຈາກທ່ອງທ່ຽວ (ຕື້ໂດລາສະຫະລັດ) | LS |
| ສັງຄົມ | | |
| GDP ຕໍ່ຫົວຄົນ | ລາຍຮັບຕໍ່ຫົວຄົນ (ໂດລາສະຫະລັດ) | WB |
| ເງິນເຟີ້ | ອັດຕາການເພີ່ມຂຶ້ນຂອງດັດຊະນີລາຄາການບໍລິໂພກ (ສ່ວນຮ້ອຍ) | LSB |

| | | |
|---|---|---|
| HDI | ດັດຊະນີການພັດທະນາຊັບພະກອນມະນຸດ | WB |

ໝາຍເຫດ: ຄວາມໝາຍຂອງ ADB ແມ່ນທະນາຄານພັດທະນາອາຊີ, WB ທະນາຄານໂລກ, MoIC ກະຊວງອຸດສະຫະກຳ ແລະ ການຄ້າ, LSB ສູນສະຖິຕິແຫ່ງຊາດລາວ.

ເພື່ອປະເມີນຜົນກະທົບຂອງ AEC ຕໍ່ເສດຖະກິດ-ສັງຄົມ ໃນ ສປປ ລາວ, ການຄາດປະມານໂດຍສົມຜົນທາງເສດຖາມິຕິແມ່ນຖືກນຳໃຊ້ ເພື່ອຄວບຄຸມບັນຫາທາງສະຖິຕິໃນການຄາດປະມານຂໍ້ມູນອະນຸກົມເວລາ , ການສຶກສາຄັ້ງນີ້ແມ່ນນຳໃຊ້ສົມຜົນ Autoregressive (AR(1)) ແລະ ຄວບຄຸມແນວໂນ້ມເວລາດັ່ງທີ່ໄດ້ສະແດງທາງລຸ່ມນີ້:

$$Y_{jt} = \alpha + \rho(Y_{jt-1}) + \delta(AEC_t) + \theta(trend_t) + \epsilon_t$$

ໂດຍທີ່ Y ແມ່ນຕົວປ່ຽນຕາມ (ຕົວປ່ຽນດ້ານເສດຖະກິດ ແລະ ສັງຄົມ) ເຊິ່ງປະກອບດ້ວຍ ມູນຄ່າເພີ່ມ ຫຼື ລວມຍອດຜະລິດຕະພັນພາຍໃນ, ການຄ້າ, ການລົງທຶນ, ການທ່ອງທ່ຽວ, ລາຍຮັບຕໍ່ຫົວຄົນ, ລະດັບລາຄາ, ແລະ ດັດຊະນີການພັດທະນາຊັບພະຍາກອນມະນຸດ. j ແມ່ນຕົວບົ່ງບອກປະເພດຂອງຕົວປ່ຽນຕາມ, t ແມ່ນຕົວບົ່ງບອກເວລາ, trend ແມ່ນຕົວກຳນົດແນວໂນ້ມ, ແລະ $\epsilon$ ແມ່ນຕົວຄາດເຄື່ອນ. ຄ່າສຳປະສິດ $\alpha$ ບົ່ງບອກຕົວຄົງຄ່າ ແລະ $\rho$, $\delta$, $\theta$ ແມ່ນຄ່າສຳປະສິດຂອງບັນດາຕົວປ່ຽນເອກກະລາດ. ໃນການປະເມີນຜົນຂອງ AEC ຕໍ່ເສດຖະກິດມະຫາພາກ ແລະ ຕົວຊີ້ວັດທາງສັງຄົມ. ຕົວປ່ຽນດັ່ງກ່າວແມ່ນນຳໃຊ້ການວັດແທກດ້ວຍ 1 ໃນໄລຍະເວລາການເຂົ້າຮ່ວມ AEC ແລະ 0 ແມ່ນສະແດງໄລຍະທີ່ບໍ່ໄດ້ເຂົ້າຮ່ວມ AEC.

# IV. ຜົນໄດ້ຮັບຈາກການສຶກສາ

## 4.1 ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນແມ່ບົດ AEC

ອາຊຽນຖືເປັນຕະຫຼາດຫຼັກຂອງ ສປປ ລາວ ມູນຄ່າການສົ່ງອອກສິນຄ້າທັງໝົດໄປປະເທດອາຊຽນເພີ່ມຂຶ້ນ 4 ເທົ່າຕົວຈາກ 1.1 ຕື້ໂດລາສະຫະລັດໃນປີ 2012 ມາເປັນ 4.0 ຕື້ໂດລາສະຫະລັດ ໃນປີ 2020, ເຊິ່ງກວມ ອັດຕາສ່ວນ 65% ຂອງມູນຄ່າການສົ່ງອອກທັງໝົດ ແລະ ກວມ 21% ຂອງ GDP ໃນປີດຽວກັນ. ໃນຂະນະທີ່ການໄຫຼເຂົ້າຂອງ FDI ຈາກປະເທດອາຊຽນກວມເຖິງ 19% ຂອງ FDI ທັງໝົດໃນຊ່ວງປີ 2010-2019. ມູນຄ່າການນາເຂົ້າສິນຄ້າໃນໜຶ່ງທົດສະວັດທີ່ຜ່ານມາ ແມ່ນສູງກວ່າມູນຄ່າການສົ່ງອອກ ເຮັດໃຫ້ ສປປ ລາວ ຂາດດຸນການຄ້າກັບປະເທດອາຊຽນສູງສຸດເຖິງ 1.6 ຕື້ໂດລາສະຫະລັດໃນປີ 2014, ຈາກນັ້ນການຂາດດຸນການຄ້າແມ່ນມີແນວໂນ້ມຫຼຸດລົງເຫຼືອພຽງ 311 ລ້ານໂດລາສະຫະລັດ ໃນປີ 2019, ມາຮອດປີ 2020 ສປປ ລາວ ເກີນດຸນການຄ້າກັບອາຊຽນເຖິງ 576.1 ລ້ານໂດລາສະຫະລັດ. ການເກີນດຸນການຄ້າດັ່ງກ່າວ ອາດເປັນຂີດໝາຍສຳຄັນທີ່ຊີ້ໃຫ້ເຫັນວ່າ ສປປ ລາວ ສາມາດຍາດແຍ່ງເອົາຜົນປະໂຫຍດຈຳນວນໜຶ່ງຈາກການ ຈັດຕັ້ງປະຕິບັດແຜນແມ່ບົດປະຊາຄົມເສດຖະກິດອາຊຽນ. ເຖິງຢ່າງໃດກໍຕາມ ມູນຄ່າເພີ່ມຈາກການສົ່ງອອກສ່ວນ ໃຫຍ່ ແມ່ນໄດ້ຈາກການນຳໃຊ້ປັດໄຈການຜະລິດພາຍໃນ ເຊິ່ງກວມອັດຕາສ່ວນເຖິງ 89.6% ຂອງມູນຄ່າການສົ່ງ ອອກທັງໝົດ ໃນປີ 2017, ໃນຂະນະທີ່ມູນຄ່າເພີ່ມທີ່ໄດ້ຈາກການນຳເຂົ້າປັດໄຈການຜະລິດຈາກຕ່າງປະເທດມີ ພຽງ 8% ໃນປີດຽວກັນ.

ອີງຕາມການສຳພາດຕົວຈິງຈາກແຕ່ລະຂະແໜງການທີ່ກ່ຽວຂ້ອງຊີ້ໃຫ້ເຫັນວ່າ ຄວາມຄືບໜ້າຂອງການຈັດ ຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນກາງສະໄໝ ແມ່ນສາມາດປະຕິບັດໄດ້ສຳເລັດ 21.3% ຂອງແຜນງານທັງໝົດ, 65% ແມ່ນກຳລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ ແລະ 13.7% ແມ່ນບໍ່ທັນໄດ້ຈັດຕັ້ງປະຕິບັດ. ໃນນັ້ນ, ເປົ້າໝາຍທີ່ປະຕິບັດສຳເລັດສູງສຸດແມ່ນເປົ້າໝາຍທີ 3 ແລະ 2, ເຊິ່ງສາມາດປະບັດໄດ້ສຳ ເລັດເຖິງ 36.2% ແລະ 31.0% ຂອງເປົ້າໝາຍທັງໝົດ. ສຳລັບເປົ້າໝາຍ ທີ່ມີຄວາມຄືບໜ້າຫຼາຍກວ່າໝູ່ແມ່ນເປົ້າໝາຍທີ 5 ແລະ 1, ເຊິ່ງສາມາດປະຕິບັດໄດ້ເຖິງ 90.0% ແລະ 70.8% ຕາມລຳດັບ, ໃນຂະນະດຽວກັນອັດຕາສ່ວນຂອງກິດຈະກຳທີ່ບໍ່ໄດ້ຈັດຕັ້ງປະຕິບັດຫຼາຍທີ່ສຸດແມ່ນເປົ້າໝາຍ ທີ 2, ເຊິ່ງກວມອັດຕາສ່ວນ 30.3% ຂອງກິດຈະກາທັງໝົດ (ຮູບທີ 4.1).

ຮູບທີ 4.1: ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ AEC ໃນແຕ່ລະເປົ້າໝາຍ (%)




ແຫຼ່ງຂໍ້ມູນ: ໄດ້ຈາການສຳພາດໃນເດືອນມິຖຸນາ, 2021.

ໝາຍເຫດ: ເປົ້າໝາຍທີ 1: ປະເທດສາມະຊິກອາຊຽນມີລະບົບເສດຖະກິດທີ່ມີການເຊື່ອມໂຍງ ແລະ ຫຍັບເຂົ້າກັນສູງຂຶ້ນ; ເປົ້າ ໝາຍທີ 2: ປະຊາຄົມເສດຖະກິດອາຊຽນມີຄວາມສາມາດແຂ່ງຂັນ, ມີນະວັດຕະກໍາ ແລະ ເຂັ້ມແຂງ; ເປົ້າໝາຍທີ 3: ສົ່ງເສີມ ການເຊື່ອມຈອດເສດຖະກິດ ແລະ ການຮ່ວມມືຂອງຂະແໜງການ; ເປົ້າໝາຍທີ 4: ປະຊາຄົມເສດຖະກິດອາຊຽນມີ ການປັບຕົວ, ເດີນໜ້າໄປພ້ອມກັນທຸກພາກສ່ວນ ແລະ ມີປະຊາຊົນເປັນສູນກາງ; ແລະ ເປົ້າໝາຍທີ 5: ປະຊາຄົມເສດຖະກິດອາຊຽນ ເປັນສ່ວນສາຄັນ ແລະ ມີບົດບາດໂດດເດັ່ນໃນປະຊາຄົມໂລກ.

ສາເຫດສໍາຄັນທີ່ເຮັດໃຫ້ການຈັດຕັ້ງປະຕິບັດແຕ່ລະເປົ້າໝາຍບໍ່ສໍາເລັດ ໂດຍລວມແມ່ນຍ້ອນເປົ້າໝາຍດັ່ງ ກ່າວຍັງສືບຕໍ່ຈັດຕັ້ງປະຕິບັດຈົນຮອດປີ 2025 (29%), ອີກສາເຫດໜຶ່ງແມ່ນຍ້ອນຈໍານວນພະນັກງານແຕ່ລະຂະ ແໜງການຍັງບໍ່ພຽງພໍ (20%), ຂາດງົບປະມານສະໜັບສະໜູນການຈັດຕັ້ງປະຕິບັດແຕ່ລະເປົ້າໝາຍ (15%) ແລະ ບາງກິດຈະກໍາຍັງບໍ່ສອດຄ່ອງກັບການຮອງຮັບດ້ານລະບຽບການພາຍໃນ (10%) ຕາມລໍາດັບ. ນອກນັ້ນ, ຂີດ ຄວາມສາມາດຂອງບຸກຄະລາກອນຍັງຈໍາກັດ, ຂາດການສະໜັບສະໜູນຈາກຂະແໜງການທີ່ກ່ຽວຂ້ອງ ແລະ ຂາດ ກົນໄກການຊີ້ນໍາທີ່ມີປະສິດທິພາບ (ຮູບທີ 4.2).

ຮູບທີ 4.2: ສາເຫດຂອງການຈັດຕັ້ງປະຕິບັດກິດຈະກໍາໃນແຕ່ລະເປົ້າໝາຍຍັງບໍ່ສໍາເລັດ (%)




ແຫຼ່ງຂໍ້ມູນ: ໄດ້ຈາການສໍາພາດໃນເດືອນມິຖຸນາ, 2021.

## 4.2 ຜົນກະທົບຕໍ່ເສດຖະກິດມະຫາພາກ ແລະ ສັງຄົມ

ໃນການຄາດປະມານຜົນກະທົບ, ສົມຜົນທາງເສດຖາມິຕິແມ່ນໄດ້ຖືກນໍາໃຊ້ ໂດຍການນໍາໃຊ້ຂໍ້ມູນຂອງຕົວປ່ຽນລະດັບມະຫາພາກ ເຊິ່ງມາຈາກຂໍ້ມູນຂອງລັດຖະບານ, ທະນາຄານໂລກ, ແລະ ທະນາຄານພັດທະນາອາຊີ. ເນື່ອງຈາກການຄາດປະມານແມ່ນນໍາໃຊ້ຂໍ້ມູນອະນຸກົມເວລາ, ການຄາດປະມານແມ່ນຕ້ອງໄດ້ຄໍານຶງບາງບັນຫາໃນທາງສະຖິຕິ. ໜຶ່ງໃນແບບຈໍາລອງທີ່ມັກຖືກນໍາໃຊ້ໃນການສ້າງແບບຈໍາລອງເພື່ອພະຍາກອນ ແລະ ຄາດປະມານຂໍ້ມູນອະນຸກົມເວລາແມ່ນ Autoregressive (AR) ເຊິ່ງສາມາດແກ້ໄຂບາງບັນຫາກ່ຽວກັບການພົວພັນກັນ (serial correlation). ການຄາດປະມານແມ່ນຈະນໍາໃຊ້ AR(1) ລະດັບໜຶ່ງໆ. ຕົວປ່ຽນມະຫາພາກທີ່ໄດ້ນໍາໃຊ້ປະກອບດ້ວຍ ການສົ່ງອອກໄປອາຊຽນ, ການນໍາເຂົ້າຈາກອາຊຽນ, ການຄ້າກັບອາຊຽນ, ລວມຍອດຜະລິດຕະພັນພາຍໃນ (GDP), ການລົງທຶນໂດຍກົງຈາກຕ່າງປະເທດ (Foreign Direct Investment: FDI), ຈໍານວນນັກທ່ອງທ່ຽວຈາກອາຊຽນ, ແລະ ລາຍຮັບທີ່ໄດ້ຈາກການທ່ອງທ່ຽວ.

ຜ່ານການຄາດປະມານຜົນກະທົບດ້ວຍວິທີການຂອງເສດຖາມິຕິ, ຜົນກະທົບຂອງ AEC ແມ່ນໄດ້ສະແດງໃນຕາຕະລາງລຸ່ມນີ້. ໂດຍພາບລວມແລ້ວຜົນກະທົບຂອງ AEC ແມ່ນມີທັງຜົນກະທົບໃນທາງບວກ ແລະ ລົບ ແລະ ມີພຽງແຕ່ບາງຕົວປ່ຽນຕາມເທົ່ານັ້ນທີ່ຜົນກະທົບ AEC ມີຄວາມສໍາຄັນໃນທາງສະຖິຕິ. ທຸກສົມຜົນມີຄ່າ Adjusted $R^2$ ແມ່ນມີຄ່າສູງເຊິ່ງມັນສະແດງໃຫ້ເຫັນຄວາມສາມາດໃນການອະທິບາຍຕົວປ່ຽນຕາມ. ຈາກຜົນການຄາດປະມານເຫັນວ່າ AEC ມີຜົນກະທົບເປັນຄ່າບວກ (0.404) ເຊິ່ງໝາຍຄວາມວ່າ ການສົ່ງອອກໄດ້ເພີ່ມຂຶ້ນ, ແຕ່ບໍ່ມີຄວາມສໍາຄັນທາງສະຖິຕິ. ສໍາລັບການນໍາເຂົ້າ, ຜົນກະທົບ AEC ຕໍ່ການນໍາເຂົ້າແມ່ນເປັນຄ່າລົບ (-0.111) ແລະ ກໍ່ບໍ່ມີຄວາມສໍາຄັນທາງສະຖິຕິ. ຜົນກະທົບຂອງ AEC ຕໍ່ການຄ້າແມ່ນເຫັນວ່າມີຄ່າບວກ (0.348) ແລະ ກໍ່ບໍ່ມີຄວາມສໍາຄັນທາງສະຖິຕິ. ໂດຍລວມຈະເຫັນວ່າຜົນກະທົບຕໍ່ການຄ້າແມ່ນລວມເອົາຜົນກະທົບຂອງການສົ່ງອອກ ແລະ ການນໍາເຂົ້າ.

ຕາຕະລາງ 4.2: ຜົນກະທົບຕໍ່ເສດຖະກິດມະຫາພາກ

| | ສົ່ງອອກອາຊຽນ | ນຳເຂົ້າອາຊຽນ | ການຄ້າອາຊຽນ | GDP | FDI | ນັກທ່ອງທ່ຽວອາຊຽນ | ລາຍຮັບຈາກການທ່ອງທ່ຽວ |
|---|---|---|---|---|---|---|---|
| AEC | 0.404 | -0.111 | 0.348 | -0.106 | 0.343 | -0.4 | -0.001 |
| t-test (AEC) | (1.666) | (-0.469) | (0.794) | (-1.529) | (1.686) | (-1.757) | (-0.010) |
| AR(1) | ກຳນົດ | ກຳນົດ | ກຳນົດ | ກຳນົດ | ກຳນົດ | ກຳນົດ | ກຳນົດ |
| ແນວໂນ້ມ | ກຳນົດ | ກຳນົດ | ກຳນົດ | ກຳນົດ | ກຳນົດ | ກຳນົດ | ກຳນົດ |
| ຂໍ້ມູນ | 20 | 20 | 20 | 35 | 31 | 9 | 22 |
| Adjusted $R^2$ | 0.831 | 0.882 | 0.886 | 0.999 | 0.815 | 0.647 | 0.959 |

ໝາຍເຫດ: ຕົວເລກໃນວົງເລບແມ່ນຄ່າທົດສອບ t–test. ຫົວໜ່ວຍການວິເຄາະຂອງການສົ່ງອອກອາຊຽນ, ນຳເຂົ້າອາຊຽນ, ການຄ້າອາຊຽນ, GDP, FDI, ນັກທ່ອງທ່ຽວ ອາຊຽນ, ແລະ ລາຍຮັບຈາກການທ່ອງທ່ຽວ ມີຫົວໜ່ວຍພັນລ້ານ.

ສຳລັບຜົນກະທົບຂອງ AEC ຕໍ່ GDP ແມ່ນມີຜົນກະທົບເປັນຄ່າລົບ (-0.106), ແຕ່ວ່າຜົນກະທົບດັ່ງກ່າວແມ່ນບໍ່ມີຄວາມສຳຄັນທາງສະຖິຕິ. ຜົນກະທົບທີ່ມີຄວາມສຳຄັນທາງສະຖິຕິ ແມ່ນຜົນກະທົບຂອງ AEC ຕໍ່ກັບການລົງທຶນໂດຍກົງຈາກຕ່າງປະເທດສຸດທິ. ຜົນກະທົບ AEC ຕໍ່ FDI ແມ່ນເທົ່າກັບ 0.343 ຫົວໜ່ວຍ ແລະ ມີຄວາມສຳຄັນທາງສະຖິຕິ 10%. ອີກໜຶ່ງຕົວປ່ຽນທີ່ມີຄວາມສຳຄັນທາງສະຖິຕິແມ່ນຈຳນວນນັກທ່ອງທ່ຽວຈາກອາຊຽນ, ແຕ່ເຖິງຢ່າງໃດກໍ່ຕາມຜົນກະທົບແມ່ນເປັນຄ່າລົບ. ນອກຈາກນັ້ນ, ລາຍຮັບຈາກການທ່ອງທ່ຽວກໍ່ມີຄ່າລົບ (-0.001), ແຕ່ມັນບໍ່ມີຄວາມສຳຄັນທາງສະຖິຕິ.

ການຄາດປະມານຜົນກະທົບຕໍ່ສະຫວັດດີການສັງຄົມແມ່ນນຳໃຊ້ແບບຈຳລອງ AR(1) ເຊັ່ນດຽວກັນກັບການຄາດປະມານຜົນກະທົບຕໍ່ເສດຖະກິດມະຫາພາກ. ຕົວປ່ຽນທີ່ນຳໃຊ້ເປັນລະດັບທາງສະຫວັດດີການສັງຄົມປະກອບດ້ວຍ GDP ຕໍ່ຫົວຄົນ, ລະດັບເງິນເຟີ້ ແລະ ດັດຊະນີພັດທະນາມະນຸດ (Human Development Index: HDI). ຜົນກະທົບຂອງ AEC ຕໍ່ກັບສະຫວັດດີການສັງຄົມແມ່ນໄດ້ສະແດງໃນຕາຕະລາງລຸ່ມນີ້. ຄ່າ Adjusted $R^2$ ແມ່ນມີຄ່າສູງສຳລັບ GDP ຕໍ່ຫົວຄົນ ແລະ ດັດຊະນີພັດທະນາມະນຸດ, ແຕ່ມີຄ່າຕໍ່າສຳລັບລະດັບເງິນເຟີ້.

ຕາຕະລາງ 4.3: ຜົນກະທົບຕໍ່ສະຫວັດດີການສັງຄົມ

| | GDP ຕໍ່ຫົວຄົນ | ເງິນເຟີ້ | HDI |
|---|---|---|---|
| AEC | -15.675 | -1.237 | -0.152 |
| t-test (AEC) | (-1.307) | (-0.082) | (-1.237) |
| AR(1) | ກຳນົດ | ກຳນົດ | ກຳນົດ |
| ແນວໂນ້ມ | ກຳນົດ | ກຳນົດ | ກຳນົດ |
| ຂໍ້ມູນ | 35 | 29 | 29 |
| Adjusted $R^2$ | 0.999 | 0.230 | 0.876 |

ໝາຍເຫດ: ຕົວເລກໃນວົງເລບແມ່ນຄ່າທົດສອບ t – test.

ຜົນກະທົບຂອງ AEC ຕໍ່ກັບ GDP ຕໍ່ຫົວຄົນ, ລະດັບເງິນເຟີ້ ແລະ ດັດຊະນີພັດທະນາມະນຸດ ແມ່ນເປັນຄ່າລົບ. ຜົນກະທົບຕໍ່ GDP ຕໍ່ຫົວຄົນແມ່ນ -15.675, ລະດັບເງິນເຟີ້ແມ່ນ -1.237 ແລະ HDI ແມ່ນ -0.152. ເຖິງວ່າຜົນກະທົບຈະແຕກຕ່າງຈາກຄວາມຄາດຫວັງ, ແຕ່ຜົນກະທົບດັ່ງກ່າວແມ່ນບໍ່ມີຄວາມສຳຄັນທາງສະຖິຕິ.

## V. ສະຫຼຸບ ແລະ ຂໍ້ສະເໜີແນະ

ການປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປະຊາຄົມເສດຖະກິດອາຊຽນກາງສະໄໝ ແມ່ນມີ ຄວາມສຳຄັນ ແລະ ຈຳເປັນ ເພື່ອທົບທວນຄືນບັນດາກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດຜ່ານມາມີຄວາມຄືບໜ້າໜ້ອຍຫຼາຍ ປານໃດ, ມີກິດຈະກຳໃດທີ່ກຳລັງຈັດຕັ້ງປະຕິບັດ ຫຼື ປະຕິບັດສຳເລັດແລ້ວ, ການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວໄດ້ສົ່ງ ຜົນຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ທັງທາງກົງ ແລະ ທາງອ້ອມແນວໃດ. ການປະເມີນຄັ້ງນີ້ແມ່ນໄດ້ອີງໃສ່ແຜນຍຸດທະສາດການຈັດຕັ້ງປະຕິ ບັດປະຊາຄົມເສດຖະກິດອາຊຽນເຊິ່ງມີແບ່ງ ອອກເປັນ 5 ເປົ້າໝາຍໃຫຍ່ ແລະ 381 ກິດຈະກຳຍ່ອຍ, ເຊິ່ງໄດ້ລົງໄປສຳພາດຕົວຈິງທັງອີງການຈັດຕັ້ງລັດ ແລະ ເອກະ ຊົນທີ່ກ່ຽວຂ້ອງ. ນອກນັ້ນ,ຍັງໄດ້ນຳໃຊ້ຂໍ້ມູນທຸຕິຍະພູມ ເພື່ອນຳສະເໜີກ່ຽວກັບແນວໂນ້ມການປ່ຽນແປງທາງດ້ານການຄ້າ, ການລົງທຶນ, ການເຊື່ອມໂຍງທາງດ້ານການເງິນ, ການເຄື່ອນຍ້າຍກຳລັງແຮງງານ, ການເຂົ້າຮ່ວມຕ່ອງໂສ້ມູນ ຄ່າເພີ່ມ, ການພັດທະນານະວັດຕະກຳລະຫວ່າງ ສປປ ລາວ ກັບປະເທດອາຊຽນ.

ຜົນໄດ້ຮັບຈາກການສຶກສາພົບວ່າ ມູນຄ່າການຄ້າດ້ານສິນຄ້າ ແລະ ດ້ານການບໍລິການລະຫວ່າງ ສປປ ລາວ ແລະ ອາຊຽນແມ່ນ ເພີ່ມຂຶ້ນແບບກ້າວກະໂດດໃນໄລຍະ 10 ປີຜ່ານມາ, ເຊິ່ງກວມຫຼາຍກວ່າ 60% ຂອງມູນຄ່າການຄ້າທັງ ໝົດ. ການປັບປຸງການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ເປັນຕົ້ນແມ່ນການຫຼຸດລົງຂອງອັດຕາພາສີ, ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ, ການຫຼຸດຂັ້ນຕອນເວລາໃນການປະກອບເອກະສານຜ່ານດ່ານ ເປັນອົງປະກອບສຳຄັນເຮັດໃຫ້ຕົ້ນທຶນການຄ້າຫຼຸດລົງ. ເຖິງຢ່າງໃດກໍຕາມ, ຄວາມສາມາດໃນການແຂ່ງຂັນຂອງຜູ່ປະ ກອບການລາວໃນເວທີພາກພື້ນ ແລະ ສາກົນ, ການປົກປ້ອງຊັບສິນທາງປັນຍາ, ການສ້າງນະວັດຕະກຳໃໝ່ແມ່ນ ຍັງຢູ່ໃນລະດັບຕໍ່າ. ນອກນັ້ນ, ການເຂົ້າເຖິງແຫຼ່ງທຶນຍັງເປັນບັນຫາຫຼັກທີ່ເປັນຂໍ້ຈຳກັດໃນການດຳເນີນທຸລະກິດຂອງຈຸ ລະວິສະຫາກິດ, ວິສະຫາກິດຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ. ການເຂົ້າຮ່ວມສັນຍາເຂດການ ຄ້າເສລີໃນ ກອບຂອງອາຊຽນ +1 ເປັນການສ້າງໂອກາດໃຫ້ ສປປ ລາວ ສາມາດສົ່ງອອກໄປປະເທດຄູ່ຄ້າດັ່ງກ່າວໃນອັດຕາພາສີຕໍ່າ ຫຼື ຍົກເວັ້ນພາສີ ແລະ ຖືເປັນຍຸດທະສາດສຳຄັນເພື່ອສ້າງຄວາມຫຼາກຫຼາຍຂອງຕະຫຼາດສົ່ງອອກ.

ອີງຕາມຜົນການສຳພາດກ່ຽວກັບບັນຫາ ແລະ ສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດແຜນປະຊາຄົມເສດຖະກິດອາຊຽນ ແລະ ອີງໃສ່ຜົນໄດ້ຮັບຈາກການຄາດປະມານ, ໄດ້ມີບາງຂໍ້ສະເໜີແນະດັ່ງນີ້:

- ຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນໃນແຕ່ລະຂະແໜງການ ໂດຍການຈັດຝຶກອົບຮົມ ໄລຍະສັ້ນ, ກາງ ແລະ ຍາວ ກ່ຽວກັບການປະຕິບັດແຜນຍຸດທະສາດປະຊາຄົມເສດຖະກິດອາຊຽນແມ່ນວຽກຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຕ່ລະເປົ້າໝາຍຂອງຂອງແຜນແມ່ບົດປະຊາຄົມເສດຖະກິດອາຊຽນຢ່າງປະສິດທິພາບ ແລະ ສາມາດບັນລຸຕາມເປົ້າໝາຍທີ່ກຳນົດໄວ້.
- ຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ເພື່ອສ້າງຄວາມເຂັ້ມແຂງ ແລະ ເພີ່ມຂີດຄວາມສາ ມາດຂອງບຸກຄະລາກອນ ໂດຍຜ່ານໂຄງການຊ່ວຍເຫຼືອຕ່າງໆ ເພື່ອຮັບປະກັນການຈັດຕັ້ງປະຕິບັດພັນທະສັນຍາ ແລະ ຍາດແຍ່ງເອົາຜົນປະໂຫຍດຈາກການເຊື່ອມໂຍງເສດຖະກິດກັບພາກພື້ນ.
- ຂະແໜງການຄວນມີການຈັດສັນງົບປະມານໃຫ້ພຽງພໍໃນການປະຕິບັດແຕ່ລະກິດຈະກຳ ເພື່ອສາມາດກຳນົດກິດຈະກຳບູລິມະສິດ, ພ້ອມທັງກຳນົດງົບປະມານທີ່ຕ້ອງການໃນການປະຕິບັດງານຈາກທາງລັດຖະບານ ແລະ ຄູ່ຮ່ວມພັດທະນາ.

## ເອກະສານອ້າງອີງ


ASEAN Secretariate. (2015). ASEAN Economic Community Blueprint 2025. One Vision, One Identity, One Community. Jakarta, p 1-43.

ASEAN Secretariate. (2021). Mid-Term Review ASEAN Economic Community Blueprint 2025. Jakarta, p 1-48.

ASEAN Secretariate. (2017). ASEAN Economic Community 2025 Consolidated Strategic Action Plan. The AEM and AEC Council, p 1-50.

ASEAN Secretariate. (2015). ASEAN 2025: Forging Ahead Together. Jakarta, p 1-136.

ASEAN Secretariate. (2019). ASEAN Integration Report 2019. Jakarta, p 1-173.

CIMB ASEAN Research Institue. AEC Blueprint 2025 Analysis. Working Paper, Vol 1, p1-11.

Menon, J., Todd, L., Hashim, A, W. and Alias, A, W. (2019). A SEAN Integration Report 2019. API ASEAN Prosperity Initiative. Working paper No. 03, p 1-36.

ລັດຖະບານ ສປປ ລາວ. (2018). ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ). ເລກທີ 48/ສພຊ. ລົງວັນທີ 20 ມິຖຸນາ, 2018. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2019). ກົດໝາຍການຄຸ້ມຄອງສ່ວຍສາອາກອນ (ສະບັບປັບປຸງ). ເລກທີ 66/ສພຊ. ລົງວັນທີ 17 ມິຖຸນາ, 2019. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2019). ກົດໝາຍວ່າດ້ວຍອາກອນຊົມໃຊ້. ເລກທີ 68/ສພຊ. ລົງວັນທີ 19 ມິຖຸນາ , 2019. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2020). ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ) ເລກທີ 81/ສພຊ. ລົງວັນທີ 29 ມິຖຸນາ, 2020. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2017). ກົດໝາຍປົກປ້ອງຜູ້ຜະລິດທີ່ໄດ້ຮັບ ຜົນກະທົບຈາກການນາເຂົ້າ. ເລກທີ 27/ສພຊ. ລົງວັນທີ 30 ຕຸລາ, 2017. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2019). ກົດໝາຍວ່າດ້ວຍການຕອບໂຕ້ການທຸ້ມ ຕະຫຼາດ ແລະ ການຊ່ວຍໜູນຂອງປະເທດ ຜູ້ສົ່ງອອກ. ເລກທີ 65/ສພຊ. ລົງວັນທີ 14 ມິຖຸນາ, 2019. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2017). ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ເລກທີ 38/ສພຊ. ລົງວັນທີ 15 ພະຈິກ, 2017. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2015). ກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ ເລກທີ 60/ສພຊ. ລົງວັນທີ 14 ກໍລະກົດ, 2015. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2019). ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ). ເລກທີ 80/ສພຊ. ລົງວັນທີ 4 ທັນວາ, 2019. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2019). ກົດໝາຍວ່າດ້ວຍການຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ). ເລກທີ 75/ສພຊ. ລົງວັນທີ 26 ທັນວາ, 2019. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2017). ກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນ ຂອງລັດ. ເລກທີ 30/ສພຊ ລົງວັນທີ 2/11/2017. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2019). ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ). ເລກທີ 73/ສພຊ. ລົງວັນທີ 22 ພະຈິກ, 2019. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2018). ກົດໝາຍວ່າດ້ວຍການປະກັນສຸຂະພາບ ເລກທີ 60/ສພຊ. ລົງວັນທີ 13 ທັນວາ, 2018. ສະພາແຫ່ງຊາດ.

ລັດຖະບານ ສປປ ລາວ. (2017). ກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ. ເລກທີ 33/ສພຊ ລົງວັນທີ 08 ພະຈິກ 2017. ສະພາແຫ່ງຊາດ.
ລັດຖະບານ ສປປ ລາວ. (2017). ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອ ເລັກໂຕຣນິກ. ເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ, 2017. ສະພາແຫ່ງຊາດ.
ລັດຖະບານ ສປປ ລາວ. (2016). ກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ. ເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016. ສະພາແຫ່ງຊາດ.
ລັດຖະບານ ສປປ ລາວ. (2019). ກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ), ເລກທີ 145. ລົງວັນທີ 21 ມັງກອນ, 2019. ສະພາແຫ່ງຊາດ.